ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ.

-----------00---------------

ອົງການໄອຍະການປະຊາຊົນສູງສຸດແລະ
ກະຊວງປ້ອງກັນຄວາມສະຫງົບ.

ເລກທີ 01/ອອປສ-ປກສ
ວັນທີ 1/2/2005

## ຄຳສັ່ງຮ່ວມລະຫວ່າງ
## ໄອຍະການປະຊາຊົນສູງສຸດກັບ
## ລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ.

ເຖິງ: ກົມກວດກາຄ້າຍດັດສ້າງອອປສ , ກົມຕຳຫຼວດຄຸມຂັງດັດສ້າງກະຊວງປ້ອງກັນຄວາມສະຫງົບ , ຄະນະກອງບັນຊາການປ.ກ.ສ . ໄອຍະການປະຊາຊົນແຂວງນະຄອນຫຼວງ, ແລະ ເຂດພິເສດໃນທົ່ວປະເທດ.

ເລື່ອງ: ການແກ້ໄຂຜູ້ຕ້ອງຫາ-ນັກໂທດອອກປິ່ນປົວທີ່ໄດ້ຮັບອະນຸຍາດເປັນທາງການແລະບໍ່ເປັນທາງການ

ອີງຕາມ: ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນແຫ່ງສປປລາວ.

ອີງຕາມ: ດຳລັດຂອງ ນາຍົກລັດຖະມົນຕີສະບັບເລກທີ......../ນຍ.ລົງວັນທີ................ ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງປ້ອງກັນຄວາມສະຫງົບ.

ອີງຕາມ: ການແກ້ໄຂຜູ້ຕ້ອງຫາ-ນັກໂທດອອກປິ່ນປົວຢູ່ນອກຄ້າຍຄຸມຂັງ-ດັດສ້າງທີ່ໄດ້ຮັບອະນຸຍາດເປັນທາງການແລະບໍ່ເປັນທາງການນັບມື້ນັບຫຼາຍຂື້ນ.

ອີງຕາມ: ການປຸກລະດົມຂົນຂວາຍຂອງລັດຖະບານ ກ່ຽວກັບການປ້ອງກັນກອງປະຊຸມສຸດຍອດອາຊ່ຽນທີ່ຈະເປີດຂື້ນໃນທ້າຍເດືອນ11ນີ້ . ໃຫ້ເປັນລະບຽບຮຽບຮ້ອຍແລະມີຄວາມສະຫງົບໂດຍພື້ນຖານ.

Notice (k t)

ການເອົາຜູ້ຕ້ອງຫາ-ນັກໂທດອອກຈາກຄ້າຍຄຸມຂັງ-ດັດສ້າງ ໄປປິ່ນປົວນັ້ນມັນແມ່ນການປະຕິບັດນະໂຍບາຍດ້ານມະນຸດສະທຳຂອງລັດຖະບານທີ່ມີຕໍ່ຜູ້ຕ້ອງຫາ-ນັກໂທດ , ທັງເປັນການປະຕິບັດລະບຽບກົດໝາຍເຂັ້ມງວດ. ປະຈຸບັນຍັງມີຜູ້ຕ້ອງຫາ-ນັກໂທດທີ່ໄດ້ຮັບອະນຸຍາດອອກປິ່ນປົວຈຳນວນໜຶ່ງບໍ່ປະຕິບັດຕາມລະບຽບຂອງການປິ່ນປົວທີ່ທາງການໄດ້ກຳນົດ,ຈຳນວນໜຶ່ງການປິ່ນປົວແຂງແຮງດີແລ້ວແຕ່ຍັງບໍ່ທັນກັບຄືນເຂົ້າໄປສະຖານທີ່ກັກຂັງ,ຄ້າຍຄຸມຂັງ-ດັດສ້າງເພື່ອສືບຕໍ່ດຳເນີນຄະດີ ແລະ ປະຕິບັດໂທດໃຫ້ຖືກຕ້ອງຕາມລະບຽບກົດໝາຍໄດ້ກຳນົດໄວ້.

ເພື່ອປະຕິບັດໃຫ້ຖືກຕ້ອງຕາມກົດໝາຍໃຫ້ເຂັ້ມງວດ.

ໄອຍະການປະຊາຊົນສູງສຸດ ແລະ ລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບຈຶ່ງອອກຄຳສັ່ງຮ່ວມດັ່ງນີ້.

1./. ມອບໃຫ້ກົມຕຳຫຼວດຄຸມຂັງ-ດັດສ້າງຂອງກະຊວງປ້ອງກັນຄວາມສະຫງົບ . ກົມກວດກາຄ້າຍດັດສ້າງຂອງອົງການໄອຍະການປະຊາຊົນສູງສຸດ . ຄະນະກອງບັນຊາການປ.ກ.ສ. ໄອຍະການປະຊາຊົນນະຄອນຫຼວງວຽງຈັນ . ປະສານສົມທົບກັນ , ເພື່ອຈັດຕັ້ງປະຕິບັດຕາມພາລະບົດບາດຂອງໃຜລາວ.

2./. ມອບໃຫ້ຄະນະກອງບັນຊາການປ.ກ.ສ. ແຂວງ ນະຄອນຫຼວງວຽງຈັນ ເຂດພິເສດ ປະສານສົມທົບກັບໄອຍະການປະຊາຊົນແຂວງ , ນະຄອນຫຼວງວຽງຈັນ ເຂດພິເສດເພື່ອຈັດຕັ້ງປະຕິບັດຕາມພາລະບົດບາດຂອງໃຜລາວ.

3./. ມອບໃຫ້ກົມຕຳຫຼວດຄຸມຂັງ-ດັດສ້າງຂອງກະຊວງປ້ອງກັນຄວາມສະຫງົບ .ຄະນະກອງບັນຊາການປ.ກ.ສ.ແຂວງ . ນະຄອນຫຼວງວຽງຈັນ , ເຂດພິເສດປະສານສົມທົບກັບຄະນະອຳນວຍການໂຮງໝໍບ່ອນທີ່ກ່ຽວຂ້ອງ ,ໂດຍມອບໃຫ້ຄະນະອຳນວຍການໂຮງໝໍອອກຄຳສັ່ງໃຫ້ ຜູ້ຕ້ອງຫານັກໂທດມາກວດກາສຸຂະພາບຄືນ , ຕາມລະບຽບຫຼັກການຂອງແພດ.

- ພາຍຫຼັງກວດກາສຸຂະພາບແລ້ວ , ຕ້ອງອອກໃບຢັ້ງຢືນດ້ານສຸຂະພາບຂອງແຕ່ລະຄົນ , ຖ້າບຸກຄົນໃດສຸຂະພາບດີຂຶ້ນສາມາດເພິ່ງຕົນເອງໄດ້ສະດວກແລ້ວ , ມອບໃຫ້ເຈົ້າໜ້າທີ່ຕຳຫຼວດທີ່ກ່ຽວຂ້ອງ . ເອົາກັບຄືນຄ້າຍຄຸມຂັງ , ຖ້າບຸກຄົນໃດເພິ່ງຕົນເອງບໍ່ທັນໄດ້ສະດວກແມ່ນໜ້າທີ່ຂອງຕຳຫຼວດ ແລະ ພະນັກງານໄອຍະການແຕ່ລະຂັ້ນຈະພິຈາລະນາຕາມທາງຄວນ.
- ຖ້າຜູ້ຕ້ອງຫາ-ນັກໂທດ . ບຸກຄົນໃດບໍ່ມາຕາມຄຳສັ່ງຂອງຄະນະອຳນວຍການໂຮງໝໍແລ້ວແມ່ນມອບໃຫ້ເຈົ້າໜ້າທີ່ຕຳຫຼວດທີ່ກ່ຽວຂ້ອງພາຕົວຜູ້ກ່ຽວມາກວດກາສຸຂະພາບຢູ່ໂຮງໝໍຕາມເວລາອັນສົມຄວນ.

4./. ພາຍຫຼັງຈັດຕັ້ງປະຕິບັດສຳເລັດຫຼືພົບຄວາມຫຍຸ້ງຍາກບັນຫາໃດໃຫ້ສະຫຼຸບລາຍງານຕໍ່ສາຍຈັດຕັ້ງຂອງຕົນ.

ສະນັ້ນໄອຍະການປະຊາຊົນສູງສຸດ ແລະ ລັດຖະມົນຕີ ວ່າການກະຊວງປ້ອງກັນຄວາມສະຫງົບຈຶ່ງອອກຄຳສັ່ງຮ່ວມສະບັບນີ້ໃຫ້ບັນດາກົມກອງ ແລະ ຂະແໜງການທີ່ກ່ຽວຂ້ອງ , ຕ້ອງຮັບຮ້ອນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ %

ລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ

ສຸວໃຈ ທຳມະສິດ

ໄອຍະການປະຊາຊົນສູງສຸດ.

ຄຳປານ ພິລາວົງ